ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ກຳມາທິການຍຸຕິທຳ

ເລກທີ 108 /ກມຍທ

ນະຄອນຫຼວງວຽງຈັນ, ລົງວັນທີ 6.11.2024

# ໜັງສືສະເໜີ

ຮຽນ : ທ່ານ ລັດຖະມົນຕີ ກະຊວງຍຸຕິທຳ ທີ່ນັບຖື.

**ເລື່ອງ : ການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງ ນາງ ບຸນທັນ ລັກປະສິດ ຂໍໂຈະການປະຕິບັດຄຳຕັດສິນຂອງສານ**

- ອີງຕາມ ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 17/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ມະຕິ ຂອງ ຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍ ການຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ ສະບັບເລກທີ 07/ຄປຈ, ລົງວັນທີ 09 ມັງກອນ 2023;
- ອີງຕາມ ບົດລາຍງານ ສະບັບເລກທີ 009/ອອປສ, ລົງວັນທີ 16 ກຸມພາ 2022 ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ຄຳຮ້ອງຂໍຄວາມເປັນທຳ ຂອງ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ຕາມຂາເຂົ້າສະພາແຫ່ງຊາດ ສະບັບເລກທີ 174/ສພຊ, ລົງວັນທີ 16 ພຶດສະພາ 2022.

ກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ຮັບບົດລາຍງານ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ຄຳຮ້ອງຂໍຄວາມເປັນທຳ ຂອງ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ກ່ຽວກັບຄະດີແພ່ງ ລະຫວ່າງ: ທ້າວ ເພັດຈຳພອນ ຂຸນດາລາ (ໂຈດ) ກັບ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ກ່ຽວເລື່ອງ: ທວງເອົາເງິນຄືນ.

ຜ່ານການຄົ້ນຄວ້າພິຈາລະນາແລ້ວ ເຫັນວ່າ: ຂໍ້ຂັດແຍ່ງດັ່ງກ່າວ ຜ່ານມາກຳມາທິການຍຸຕິທຳ ສະພາແຫ່ງຊາດ ໄດ້ກວດກາ ແລະ ສົມທົບ ກັບສະພາປະຊາຊົນແຂວງຫຼວງພະບາງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອລົງເກັບກຳຂໍ້ມູນແລ້ວລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ຈຶ່ງໄດ້ອອກແຈ້ງການໃຫ້ອົງການໄອຍະການປະຊາຊົນສູງສຸດ ກວດກາຄືນ ຕາມແຈ້ງການ ສະບັບເລກທີ 580/ກມຍທ, ລົງວັນທີ 24 ກັນຍາ 2020. ອົງການໄອຍະການປະຊາຊົນສູງສຸດ ໄດ້ລາຍງານມາຍັງສະພາແຫ່ງຊາດ ຕາມບົດລາຍງານ ສະບັບເລກທີ 009/ອອປສ, ລົງວັນທີ 16 ກຸມພາ 2022 ຢັ້ງຢືນເອົາຕາມຄຳພິພາກສາຂອງສານປະຊາຊົນສູງສຸດ ສະບັບເລກທີ 63/ລລ.ພ, ລົງວັນທີ 25 ຕຸລາ 2017 ວ່າຖືກຕ້ອງຕາມກົດໝາຍແລ້ວ. ແຕ່ ນາງ ບຸນທັນ ລັກປະສິດ ໄດ້ສືບຕໍ່ຮ້ອງຂໍຄວາມເປັນທຳ ມາຍັງສະພາແຫ່ງຊາດ ຕື່ມອີກ. ກຳມາທິການຍຸຕິທຳ ຈຶ່ງໄດ້ຄົ້ນຄວ້າອອກໜັງສືສະເໜີ ສະບັບເລກທີ 103/ກມຍທ, ລົງວັນທີ 01 ສິງຫາ 2022 ຫາທ່ານລັດຖະມົນຕີກະຊວງຍຸຕິທຳ ເພື່ອເລື່ອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ໄດ້ຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງ ໃນວັນທີ 19 ພຶດສະພາ 2023 ແຕ່ຜົນຂອງກອງປະຊຸມຮ່ວມ ຍັງບໍ່ທັນເອກະພາບໄປລວງດຽວກັນກັບ ການຕົກລົງ ຂອງສະພາປະຊາຊົນແຂວງຫຼວງພະບາງ ແລະ ການກວດກາ ເກັບກຳຂໍ້ມູນ ຂອງກຳມາທິການຍຸຕິທຳ ສະພາແຫ່ງຊາດ.

ກຳມາທິການຍຸຕິທຳ ເຫັນວ່າ ບັນຫາດັ່ງກ່າວ ຍັງມີຄວາມຈຳເປັນທີ່ຈະໄດ້ ຄົ້ນຄວ້າສົມທົບກັບພາກສ່ວນກ່ຽວຂ້ອງລະອຽດຕື່ມ ກ່ອນລາຍງານ ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ເພື່ອຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ

ຄວາມເປັນຈິງ, ຈຶ່ງສະເໜີມາຍັງທ່ານ ລັດຖະມົນຕີກະຊວງຍຸຕິທຳ ຊີ້ນຳພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາໂຈະການຈັດຕັ້ງປະຕິບັດຄຳພິພາກສາຂອງສານ ຕາມມາດຕາ 311 ຂໍ້ 8 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບປີ 2012 ແລະ ມາດຕາ 102 ຂອງກົດໝາຍວ່າດ້ວຍ ການປະຕິບັດຄຳຕັດສິນຂອງສານ ສະບັບປີ 2021 ຈົນກວ່າ ຈະມີຄຳເຫັນຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມພາລະບົດບາດ ທີ່ກຳນົດໄວ້ຕາມກົດໝາຍ.

**ກຳມາທິການຍຸຕິທຳ**

**ປະທານ**

ຣສ. ປອ. ວຽງວິໄລ ທິ່ງຈັນໄຊ

■ <u>ບ່ອນສົ່ງ</u>:

| | |
|---|---|
| - ຄະນະປະຈຳສະພາແຫ່ງຊາດ ທ່ານລະ | 01 ສະບັບ ເພື່ອຊາບ; |
| - ສະພາປະຊາຊົນແຂວງ ຫຼວງພະບາງ | 01 ສະບັບ ເພື່ອຊາບ; |
| - ຜູ້ຮ້ອງຂໍຄວາມເປັນທຳ | 01 ສະບັບ ເພື່ອຊາບ; |
| - ເກັບສຳເນົາ | 02 ສະບັບ. |